## ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 22 ມົກກະຣາ 2006 (1-22-2006)

# ເຣື່ອງຂອງນິສັຍ

**ຂໍ້ພຣະຄັມພີໃນບົດຮຽນ:** ສຸພາສິດ 4:23-27; 6:16-19; ມັດທາຍ 15:16-20

**ພຣະຄັມພີແຫ່ງຄວາມຈິງ:** ເພາະວ່ານິສັຍຂອງແຕ່ລະຄົນກໍອອກມາຈາກຫົວໃຈ, ພວກທີ່ເຊື່ອຄວນຈະລະມັດລະວັງຮັກສາຫົວໃຈຂອງພວກເຂົາໃຫ້ເປັນໄປຕາມຄວາມຈິງຂອງພຣະເຈົ້າ.

**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ໄດ້ແຕ່ງຂຶ້ນເພື່ອຊ່ວຍທ່ານໃນການພັດທະນາທັສນະທີ່ຖືກຕ້ອງຕໍ່ຫົວເຣື່ອງນີ້ໂດຍ:

- ໃຫ້ສັງເກດຮູ້ນິສັຍທີ່ເກີດມາຈາກສະພາບການຂອງຫົວໃຈ-ຣວມທັງການປະພຶດແລະຄວາມປາຖນາ; ແລະ
- ການຕັດສິນໃຈອັນແນ່ວແນ່ຕໍ່ທາງຂອງຫົວໃຈທ່ານໃຫ້ຕົງກັບຄຸນຄ່າຂອງພຣະເຈົ້າ.

## ເປັນຫຍັງນິສັຍຈຶ່ງສຳຄັນ?

ເຈນແກວ່ງຫົວໃນອາການແບບລັງກຽດຂນະທີ່ລາວປິບມອດລາຍການຂ່າວຈາກໂທຣະທັດ. "ເບິ່ງເຫມືອນວ່າຄືບໍ່ມີຜູ້ສັດຊື່ເລີຍ." ລາວກ່າວຕໍ່ຜູ້ເປັນສາມີ. ທຸກໆແລງກໍຈະມີແຕ່ຂ່າວກ່ຽວກັບເຣື່ອງການສໍ້ໂກງຍັກຍອກໃນທຸຣະກິດຫລືໃນວົງການຣັຖບານ. ມີຫຍັງເກີດຂຶ້ນກັບຄວາມຊື່ສັດແບບແຕ່ເກົ່າແຕ່ກ່ອນນັ້ນ?"

"ປາບຂ້ອຍແດ່, "ບຣວເວົ້າຕອບ. "ຂນະນີ້ຂ້ອຍກຳລັງປະກອບເອກກະສານພາສີລາຍໄດ້ຂອງພວກເຮົາຢູ່," ລາວເວົ້າຕື່ມອີກພ້ອມທັງຍິ້ມ, "ເຈົ້າຄິດວ່າພວກເຮົາຈະຫລີກລ້ຽງການກວດກາໄດ້ບໍ່ກ່ຽວແກ່ການທວງເອົາເງິນຄ່າເຮັດຊົງຜົມຂອງເຈົ້າວ່າເປັນລາຍຈ່າຍຂອງທຸຣະກິດຫລືວ່າເປັນຜູ້ຢູ່ອາສັຍນຳເຮົາ?"

ເມື່ອບໍ່ນານມານີ້ ພວກເຮົາກໍໄດ້ຖືກບອກວ່າຊີວິດສ່ວນຕົວຂອງບຸກຄົນນຶ່ງຈະບໍ່ມີສ່ວນພົວພັນກັບຄວາມສາມາດໃນການຮັບໃຊ້ຫນ້າທີ່ສາທາຣະນະຂອງຜູ້ນັ້ນ, ສັງຄົມໄດ້ຖືກມ້ວນເຂົ້າເນື່ອງຈາກຜົນສະທ້ອນຂອງບັນຫາກ່ຽວເຣື່ອງຄວາມຊື່ສັດສຸຈຣິດດັ່ງເຊັ່ນບໍຣິສັດເຮັດເຣື່ອງຫນ້າລະອາຍແລະຄົນພາຍໃນກໍມີການຂາຍກັນ. ຫລາຍໄປກ່ວານັ້ນອີກ, ມີບາງຄົນກໍຍັງປລາດໃຈຢູ່ວ່ານິສັຍມັນເປັນເຣື່ອງຈິງຈັງແທ້ຫລື-ແລະເປັນພິເສດໃນຕົວຜູ້ກ່ຽວເອງວ່ານິສັຍເປັນບັນຫາຫລື. ທັງພຣະຄັມພີພາກພຣະສັນຍາເດີມແລະພາກພຣະສັນຍາໃຫມ່, ໂດຍຜ່ານການດົນໃຈຜູ້ຂຽນພຣະທັມສຸພາສິດແລະຜ່ານການສິດສອນຂອງພຣະເຢຊູ, ຢັ້ງຢືນວ່ານິສັຍຂອງຄົນນຶ່ງແມ່ນສຳຄັນຢ່າງຍິ່ງໃຫຍ່ແລະຄົນຜູ້ນັ້ນຄວນລະມັດລະວັງຮັກສາຫົວໃຈຂອງຕົນ.

## ສຶກສາພຣະຄັມພີ

### 1. ທຳຄວາມເຂົ້າໃຈທັມມະຊາດຂອງນິສັຍ (ມັດທາຍ 15:16-20)

ນິສັຍໄດ້ມີຄວາມຫມາຍວ່າພວກເຮົາປະພຶດແນວໃດເມື່ອບໍ່ມີຄົນເຫັນເຮົາ. ນີ້ແມ່ນຄວາມຫມາຍທີ່ດີສຳລັບນິສັຍບໍ່? ແມ່ນຫຍັງຄືຄວາມຫມາຍຂອງຊີວິດນຶ່ງວ່າມັນດີຫລືຊົ່ວ, ສັດຊື່ຫລືບໍ່ສັດຊື່? ມັນເຂົ້າກັບຄວາມຄາດຫມາຍຂອງສັງຄົມບໍ່? ຫລືວ່າມັນເປັນບາງຢ່າງທີ່ເລິກໄປກວ່ານັ້ນ?

ບໍ່ຫນ້າເຊື່ອເລີຍ, ມີຜູ້ນຳບາງສາສນາໂຈມຕີພຣະເຢຊູເພາະວ່າພວກຕິດຕາມພຣະອົງບໍ່ໄດ້ເຮັດຕາມພິທີທາງສາສນາໃນປະເພນີຂອງພວກເຂົາ. ນຶ່ງໃນພິທີຕາມປະເພນີແມ່ນພິທີການລ້າງມືກ່ອນການກິນເຂົ້າ. ພວກເຂົາເຮັດເກີນກວ່າການທີ່ໃຫ້ຖືກຫລັກອະນາມັຍຊື່ໆ, ຄົນຢືວປະກາດວ່າຖ້າຜູ້ໃດທີ່ໄດ້ກິນເຂົ້າໂດຍບໍ່ເຮັດພິທີຊຳລະລ້າງທາງສາສນາແລ້ວແມ່ນຜູ້ນັ້ນບໍ່ສະອາດດ້ານວິນຍານ.

ພຣະເຢຊູໄດ້ເປີດເຜີຍຄວາມໜ້າຊື່ໃຈຄົດຂອງພວກເຂົາໂດຍຊີ້ໃຫ້ເຫັນວ່າພວກເຂົາໄດ້ຮັກສາຄວາມບໍລິສຸດແຕ່ຂ້າງນອກ, ພວກເຂົາຂາດຕໍ່ການຮັກສາໃຫ້ສະໝໍ່າສະເມີໃນເລື່ອງທີ່ເປັນພື້ນຖານອັນໃຫຍ່ຂອງຄວາມຊື່ສັດສຸຈະຣິດ ແລະຄວາມເມດຕາກະຣຸນາ. ພຣະອົງເນັ້ນໃສ່ທີ່ຄົນຜູ້ນຶ່ງທີ່ປະຄວາມບໍ່ສະອາດໄວ້ໂດຍທີ່ຮັກສາຫົວໃຈທີ່ບໍ່ບໍຣິສຸດນັ້ນ, ບໍ່ແມ່ນໂດຍການຂາດຈາກການຕິດໜັ້ນຕໍ່ພິທີທາງສາສນາ.

ພຣະເຢຊູໄດ້ປະກາດວ່າພວກເຂົາ**ຂາດຄວາມເຂົ້າໃຈ**. ຂນະທີ່ພວກເຂົາຊໍານານເຣື່ອງກົດໝາຍຂອງສາສນາ, ພວກເຂົາໄດ້ເສັຍຊາຕໍ່ຄວາມຈິງອັນເລິກເຊິ່ງດ້ານວິນຍານ. ຄວາມຮູ້ແມ່ນການຮຽນມາຈາກຂໍ້ເທັດຈິງຫລາຍຢ່າງ. ຄວາມເຂົ້າໃຈແມ່ນຄວາມສາມາດນໍາເອົາຄວາມຮູ້ນັ້ນມາປະກອບໃຊ້. ພຣະເຢຊູກ່າວເຖິງຄວາມເຂົ້າໃຈຝ່າຍຈິດວິນຍານ, ຄວາມສາມາດຕໍ່ການສໍາພັນກັບຄວາມຈິງຂອງພຣະເຈົ້າໃນການດໍາຣົງຊີວິດແຕ່ລະວັນ. ມີຫລາຍຄົນອາດຈະໄດ້ຮໍ່າຮຽນພຣະຄັມພີ, ແຕ່ພວກເຂົາບໍ່ສາມາດນໍາເອົາຄວາມຈິງເຫລົ່ານັ້ນມາປະກອບໃຊ້ໃນຊີວິດປະຈໍາວັນ.

ການໃຊ້ການໂຕ້ຕອບຂນະທີ່ມີໂອກາດໃນການສິດສອນ, ພຣະເຢຊູໄດ້ເຕືອນໃຈພວກເຂົາວ່າ**ສິ່ງໃດກໍຕາມທີ່ເຂົ້າໄປໃນປາກກໍລົງໄປໃນທ້ອງ**ແລະຫລັງຈາກນັ້ນ**ກໍຖ່າຍອອກມາ**. ພຣະອົງໄດ້ຊີ້ໃຫ້ເຫັນວ່າອັນໃດທີ່ເຮົາກິນຫລືວິທີການກິນບໍ່ໄດ້ກ່ຽວຂ້ອງກັບສະພາບຝ່າຍວິນຍານຂອງພວກເຮົາ.

ໃນອີກດ້ານນຶ່ງ, ແມ່ນຫຍັງກໍຕາມທີ່ອອກມາຈາກປາກແມ່ນຫລັກຖານຂອງນິສັຍແທ້ຂອງຜູ້ນັ້ນ, ສໍາລັບແຫລ່ງທີ່ມາຂອງມັນແມ່ນຫົວໃຈ. ຫລາຍຄັ້ງພຣະຄັມພີໃຊ້ຫົວໃຈວ່າເປັນຕົວແທນສູນກາງແຫ່ງແຫລ່ງທີ່ມາຂອງຊີວິດ. ແຕ່ວ່າແມ່ນຫຍັງກໍຕາມທີ່ຜູ້ນຶ່ງເວົ້າຫລືກະທໍາສະທ້ອນໃຫ້ເຫັນຫົວໃຈທີ່ເຕັມໄປດ້ວຍຄວາມຜິດບາບ, ຄວາມບໍ່ຊື່ສັດ ແລະການສໍ້ໂກງ, ຫລັງຈາກນັ້ນລາວກໍບໍ່ສະອາດເປັນແນ່ແທ້. ບັນຫາຂອງຫົວໃຈທີ່ບໍ່ສະອາດແມ່ນເຮັດໃຫ້ມະນຸດບໍ່ມີຄວາມບໍຣິສຸດ.

ນິສັຍຂຍາຍອອກມາຈາກຫົວໃຈ. ບາດກ້າວທໍາອິດຕໍ່ການມີນິສັຍທີ່ຖືກຕ້ອງແມ່ນຄວາມເຂົ້າໃຈເຖິງຄວາມເສື່ອມຊາມຂອງຫົວໃຈມະນຸດ. ປາສຈາກພຣະຄຣິດ, ທໍາມະຊາດຂອງພວກເຮົາແມ່ນອຽງໄປຫາຄວາມຜິດບາບ. ພວກເຮົາຕ້ອງການພຣະເຢຊູໃນການປ່ຽນແປງທາງໃນຕົວເຮົາໃຫ້ເປັນເໝືອນພຣະອົງ. ຂ່າວດີນັ້ນກໍຄືພຣະເຢຊູຕ້ອງການທີ່ຢາກຈະຊ່ວຍພວກເຮົາໃຫ້ພົ້ນ ບໍ່ພຽງແຕ່ຈາກການລົງໂທດອັນຕລອດໄປເປັນນິດຂອງຄວາມຜິດບາບຂອງພວກເຮົາເທົ່ານັ້ນແຕ່ຍັງໄດ້ປ່ຽນຫົວໃຈຂອງພວກເຮົາໃຫ້ສະທ້ອນເຫັນຫົວໃຈຂອງພຣະອົງອີກດ້ວຍ.

## ໒. <u>ໂອບກອດຕ້ອນຮັບເອົາຄຸນຄ່າຂອງພຣະເຈົ້າ</u> (ສຸພາສິດ 6:16-19)

ພຣະເຈົ້າບໍ່ໄດ້ຢູ່ຢ່າງສິນທັມລ້າງແຕ່ພຣະອົງເປັນຫ່ວງຫລາຍກ່ຽວກັບການຕັດສິນໃຈແລະໃນການກະທໍາຂອງມະນຸດ, ພຣະອົງຈະເຝົ້າເບິ່ງຈະພິພາກສາໃຫ້ຖືກຕາມບຸຄລິກລັກສະນະນິສັຍຂອງພຣະອົງ.

ຜູ້ທີ່ບັນທຶກພຣະທັມສຸພາສິດໄດ້ໃຫ້ຕົວຢ່າງຂອງການປະພຶດທີ່ພຣະເຈົ້າບໍ່ພໍພຣະທັຍ. ລາວໄດ້ໃຊ້ຄໍາກາບກອນຊຶ່ງພົບຢູ່ຫລາຍຄັ້ງໃນຂໍ້ພຣະຄັມພີມີຫົກຢ່າງທີ່ພຣະຜູ້ເປັນເຈົ້າກຽດຊັງ; ທີ່ຈິງມີເຈັດຢ່າງທີ່ໜ້າລັງກຽດຕໍ່ພຣະອົງ. ພຣະຄັມຂໍ້ນີ້ບໍ່ໄດ້ມີການຂັດແຍ້ງແຕ່ຢ່າງໃດຫລືບໍ່ໄດ້ແນະນໍາວ່າພຣະເຈົ້າຈະກຽດຊັງແຕ່ສິ່ງເຫລົ່ານີ້ເທົ່ານັ້ນ. ແທນທີ່ຈະເປັນຢ່າງນັ້ນ, ຜູ້ຂຽນມີຄວາມຕ້ອງການຢາກສະແດງໃຫ້ເຫັນວ່າການກະທໍາປະເພດໃດທີ່ເປີດເຜີຍໃຫ້ເຫັນນິສັຍທີ່ບໍ່ບໍຣິສຸດ.

ພວກທີ່ອ່ານຄົງຈະງົງກ່ຽວກັບການໃຊ້ຄໍາວ່າກຽດຊັງໃນການບັນລະຍາຍນິສັຍຂອງພຣະເຈົ້າ. ການທີ່ພຣະເຈົ້າກຽດຊັງບາງຢ່າງບໍ່ໄດ້ແນະນໍາໃຫ້ຄິດວ່າພຣະເຈົ້າໄດ້ເຮັດຜິດບາບ, ນັ້ນເປັນໄປບໍ່ໄດ້. ຄໍາວ່າກຽດຊັງໄດ້ບັນລະຍາຍເຖິງກິຣິຍາຂອງຜູ້ທີ່ຢູ່ຝ່າຍກົງກັນຂ້າມກັບບາງສິ່ງ, ການເປັນຢູ່ທີ່ໜ້າກຽດຊັງໂດຍບາງສິ່ງ, ຫລືການບໍ່ຍອມຮັບບາງສິ່ງ. ເຣື່ອງທີ່ຖືກກ່າວລຽງຕາມລໍາດັບໂດຍຜູ້ບັນທຶກພຣະທັມຄັມພີເນັ້ນໃຫ້ເຫັນເຖິງສິ່ງທີ່ບໍ່**ສາມາດເປັນທີ່ພໍພຣະທັຍຂອງພຣະເຈົ້າ**; ສະນັ້ນ, ສິ່ງເຫລົ່ານີ້ຈຶ່ງເປັນປໍຣະປັກຕໍ່ຝ່າຍສິນທັມຂອງຜູ້ບໍຣິສຸດ.

ລໍາດັບໄດ້ເລີ້ມຕົ້ນດ້ວຍ**ຕາຈອງຫອງ**. ການລິເລີ້ມຂອງຄວາມຜິດບາບແມ່ນໃຫ້ໄດ້ເຫັນຂ້າງນອກແລ້ວເຕັມໄປດ້ວຍຄວາມຍິ່ງຜອງຕົວ. ນິສັຍຕາມຢ່າງພຣະເຈົ້າເລີ້ມດ້ວຍການຖ່ອມໃຈ, ການສໍານຶກເຖິງຄວາມຕ້ອງການຂອງພວກ

ເຮົາຕໍ່ຄວາມເມດຕາຂອງພຣະເຈົ້າ.

ການຫລອກລວງແມ່ນບໍ່ມີບັນຫາທາງດ້ານຈະຣິຍາທັມຂອງຜູ້ນັ້ນ ທີ່ສາມາດມີເຫດຜົນຕໍ່ທຸກໆດ້ານທີ່ກົງກັບຄວາມຕ້ອງການຂອງລາວເອງແມ່ນວ່າສາມາດຮັບເອົາໄດ້ຫມົດ. **ປາກເວົ້າຂີ້ຕົວະ**ແມ່ນກະທຳໄດ້ງ່າຍດາຍ. ພຣະເຈົ້າມີພຣະປະສົງໃຫ້ໄພ່ພົນຂອງພຣະອົງບໍ່ພຽງແຕ່ເວົ້າເທົ່ານັ້ນ, ແຕ່ຍັງຕ້ອງປະພຶດດີ, ຢ່າງສັດຊື່, ຕລອດທັງຂນະທີ່ມັນຝືນຕໍ່ຜົນປໂຍດສ່ວນຕົວກໍຕາມ.

ປາກທີ່ເວົ້າຂີ້ຕົວະມີຫລາຍຄັ້ງກໍຄຽງຄູ່ໄປກັບ**ມືທີ່ຂ້າຄົນຜູ້ບໍ່ມີຄວາມຜິດ**. ຜູ້ທີ່ຢູ່ໃນຄວາມຜິດບາບກໍນຳຕົວເອງປະກອບສ່ວນໃນກິຈການຕ່າງໆທີ່ເປັນພັຍຕໍ່ຄົນທີ່ບໍ່ມີຄວາມຜິດ. ທີ່ເວົ້າວ່າຄົນທີ່ບໍ່ມີຄວາມຜິດໃນທີ່ນີ້ບໍ່ໄດ້ຫມາຍຄວາມວ່າເປັນຄົນທີ່ບໍ່ມີບາບ, ແຕ່ໄດ້ຫມາຍເຖິງຄົນໃດຄົນນຶ່ງທີ່ບໍ່ມີສ່ວນອັນໃດທີ່ສົມຄວນຈະໄດ້ຮັບໂພຍພັຍນັ້ນ.

ຫົວໃຈປະເພດນີ້ມີນິສັຍເປັນ**ໃຈທີ່ຄິດແຜນການຊົ່ວຮ້າຍ**. ຜູ້ທີ່ຂຽນພຣະທັມຕອນນີ້ໄດ້ບັນລະຍາຍບຸກຄົນປະເພດນີ້ວ່າເປັນຜູ້ມີອຸບາຍບໍ່ຮູງບ່າຍແຜນການເພື່ອຫລອກລໍ້ໃຫ້ເປັນດັ່ງຄວາມຕັ້ງໃຈແຫ່ງຄວາມຊົ່ວຮ້າຍຂອງຕົນ.

ເພື່ອຄວາມສຳຣານໃຈບໍ່ຕ້ອງລໍຖ້າໂອກາດທີ່ຈະເຮັດບາບ, ຜູ້ຊົ່ວຮ້າຍນັ້ນປາກົດຕົວອອກໂດຍການໃຊ້**ຕີນທີ່ແລ່ນໄປເຮັດຊົ່ວ**. ຢ່າງວ່ອງໄວ, ຜູ້ທີ່ບໍ່ມີພຣະເຈົ້າກໍຮີບຮ້ອນໃສ່ທຸກຢ່າງທີ່ເປັນການຊົ່ວຊ້າ. ຄຳເວົ້ານີ້ບໍ່ພຽງແຕ່ຮວມທັງຄວາມຜິດບາບເທົ່ານັ້ນ, ແຕ່ຮວມທັງຄວາມຊົ່ວຮ້າຍທີ່ທຳອັນຕະລາຍຕໍ່ຄົນອື່ນດ້ວຍ. ສະພາບການຕາມທຳມະຊາດຂອງຜູ້ທີ່ເສັຽຫາຍນີ້ແມ່ນຊອກຫາແຕ່ໂອກາດທີ່ຈະນຳຕົວເອງເຂົ້າສ່ວນໃນຄວາມຊົ່ວຊ້ານັ້ນ.

ນິສັຍອັນທີ່ຫົກທີ່ບໍ່ພໍພຣະທັຍພຣະເຈົ້າຄື**ພະຍານເວົ້າຕົວະຕໍ່ສູ້ຄົນອື່ນ**. ຄົນຜູ້ນີ້ໄດ້ຕັ້ງໃຈກ່າວຄຳພະຍານບໍ່ຈິງເພື່ອແກ້ງໃຫ້ຄົນອື່ນໄດ້ຮັບອັນຕະລາຍ. ຄຳວ່າພະຍານໃນທີ່ນີ້ເລັງເຖິງເຫດການທາງກົດຫມາຍທີ່ທາງສານອາສັຍໃຫ້ຄົນກ່າວແຕ່ຄວາມຈິງ. ຜູ້ທີ່ຍິ່ງພອງຕົວເອົາຕົວເອງເປັນຫລັກຈະບໍ່ໃສ່ໃຈຫຍັງຫມົດຕໍ່ກົດຫມາຍຫລືສຳລັບການຕັດສິນ, ແຕ່ວ່າພຽງແຕ່ໃຫ້ຄວາມສົນໃຈຕໍ່ຜົນກຳໄລຂອງຕົວເອງ.

ບາງທີນີ້ແມ່ນສິ່ງທີ່ຫນ້າກຽດຫນ້າຊັງຫລາຍຕໍ່ພຣະເຈົ້າຄື**ຜູ້ຫາເຣື່ອງໃຫ້ຍາດພີ່ນ້ອງຜິດຖຽງກັນ**. ໃນພຣະທັມໂຣມ 16:17-18, ອາຈານໂປໂລໄດ້ແນະນຳຄຣິສຕະຈັກບໍ່ໃຫ້ກໍ່ເຫດວິວາດກັນແລະຖົກຖຽງກັນ. ຜູ້ທີ່ເຮັດແນວນັ້ນບໍ່ໄດ້ຊອກຫາຜົນປໂຍດທີ່ດີຂອງຄຣິສຕະຈັກ, ແຕ່ວ່າມີແຜນຢາກໃຫ້ພໍໃຈພວກເຂົາເອງ.

ຄຸນຄ່າຂອງພຣະເຈົ້າມີສ່ວນແບ່ງທິດທາງສິນທັມສຳລັບມະນຸດທຸກໆຄົນ. ພວກເຮົາແຕ່ລະຄົນຈະຂາດສິນທັມຖ້າພວກເຮົາໄປຕາມທາງຂອງພວກເຮົາເອງ. ພວກເຮົາຕ້ອງການວິນຍານຂອງພຣະເຈົ້າເພື່ອເສີມກຳລັງພວກເຮົາໃຫ້ດຳຣົງຊີວິດເຫມືອນພຣະຄຣິດ. ພວກເຮົາຕ້ອງການພຣະທັມພຣະເຈົ້າເພື່ອຄວາມເຂົ້າໃຈໃນການດຳຣົງຊີວິດເຫມືອນພຣະຄຣິດ. ພວກເຮົາຕ້ອງການພຣະບຸດຂອງພຣະເຈົ້າໃນການດຳຣົງຊີວິດຂອງພຣະອົງຜ່ານທາງພວກເຮົາ, ສະເພາະເຫລົ່ານີ້ເທົ່ານັ້ນນິສັຍຂອງພວກເຮົາຈຶ່ງຈະສະທ້ອນນິສັຍຂອງພຣະອົງ.

## 3. <u>ປ້ອງກັນຮັກສາຫົວໃຈຂອງທ່ານ</u> (ສຸພາສິດ 4:23-27)

ນິສັຍຢ່າງພຣະເຈົ້າບໍ່ໄດ້ມາຍ້ອນການຊອກສແວງຫາດ້ວຍກຳລັງມະນຸດຢ່າງດຽວ. ພຣະເຈົ້າເທົ່ານັ້ນທີ່ປ່ຽນແປງຫົວໃຈ. ເມື່ອພຣະອົງກະທຳ, ພຣະອົງກໍກະທຳນອກເຫນືອທັມມະຊາດ. ບໍ່ພຽງແຕ່ເທົ່ານັ້ນດອກ, ການມີຣະບຽບສ່ວນຕົວກໍແມ່ນຢາກກຳຈັດນິສັຍທີ່ຜິດບາບແລະພັດທະນານິສັຍຢ່າງພຣະເຈົ້າ. ເມື່ອການມີຣະບຽບສ່ວນຕົວຫາກຍາກທີ່ຈະຕ້ອງເຮັດ, ພຣະເຈົ້າກໍປະທານກຳລັງແກ່ພວກທີ່ເຊື່ອໃນການຝຶກຫັດການມີວິນັຍສ່ວນຕົວໃຫ້ບັນລຸໄດ້ຕາມຄາດຫມາຍ.

ຜູ້ຂຽນທີ່ມີສະຕິປັນຍາໄດ້ຊັກຊວນໃຫ້ພວກຜູ້ອ່ານວ່າເຫນືອກວ່າສິ່ງອື່ນໃດຫມົດ ຈົ່ງປ້ອງກັນຮັກສາຫົວໃຈ. ມັນສຳຄັນຫລາຍກວ່າກິຈການທາງພາຍນອກ, ຊີວິດພາຍໃນຄວນເຝົ້າປ້ອງກັນໄວ້. ຄຳວ່າຮັກສາຫລາຍຄັ້ງໄດ້ເອົາໃຊ້ໃນການບັນລະຍາຍສຳລັບສະຖານທີ່ງມີຄຸນຄ່າຫລືການເຝົ້າເບິ່ງເທິງປ້ອມຍາມ. ເພາະວ່າຫົວໃຈເປັນ**ແຫລ່ງທີ່ມາຂອງຊີວິດ**, ດ້ວຍວ່າທຸກໆດ້ານຂອງນິສັຍເລີ້ມອອກມາຈາກທີ່ນັ້ນ, ພວກທີ່ເຊື່ອຄວນລະມັດລະວັງໃນການປ່ອຍໃຫ້ສິ່ງທີ່ຈະເຂົ້າໄປກະຕຸ້ນໃນຫົວໃຈຂອງພວກເຂົາ.

ຂນະທີ່ພຣະທັມສຸພາສິດບົດທີ 6 ບັນລະຍາຍເຖິງອົງປະກອບໃນຊີວິດຂອງຄົນທີ່ສາມາດຫັນປ່ຽນໂດຍຄວາມ

ຜິດບາບ, ໃນພຣະທັມບົດນີ້ໄດ້ໃຫ້ຕົວຢ່າງງລະອຽດຂອງນິສັຍຢ່າງພຣະເຈົ້າ. ເມື່ອການເວົ້າຂອງຄົນໃດຄົນນຶ່ງໄດ້ເປີດເຜີຍໃຫ້ເຫັນເຖິງຫົວໃຈຜູ້ນັ້ນແລ້ວ, ຜູ້ທີ່ເຊື່ອບໍ່ຄວນ**ເວົ້າຢ່າງບໍ່ສັດຊື່ຫລືຢ່າງຄົດລ້ຽວ**. ຄຳເວົ້າທຳອິດແມ່ນບັນລະຍາຍເຖິງບາງສິ່ງທີ່ຖືກປົດເປືອນ; ຄຳເວົ້າທີສອງມີຄວາມຫມາຍວ່າຫັນເຫ. ພວກທີ່ຕິດຕາມພຣະຄຣິດຄວນລະວັງບໍ່**ໃຊ້ປາກ**ກ່າວຄຳເວົ້າອັນໃດທີ່ບໍ່ຊື່ຕົງແລະເປັນຈິງ. ດັ່ງທີ່ພຣະເຢຊູໄດ້ກ່າວໄວ້ວ່າ, "ແຕ່ຈົ່ງໃຫ້ຖ້ອຍຄຳຂອງພວກທ່ານເປັນດັ່ງນີ້ "ແມ່ນ"ກໍວ່າ"ແມ່ນ"""ບໍ່ແມ່ນ"ກໍວ່າ"ບໍ່ແມ່ນ""(ມັດທາຍ 5:37)

ຕົວຢ່າງອີກອັນນຶ່ງຂອງນິສັຍຄຣິສຕຽນຄືການຕັດສິນໃຈເດັດຂາດບໍ່ແມ່ນລັງເລໃນການທົດລອງຕ່າງໆ. **ຕາ**ຂອງຜູ້ທີ່ເຊື່ອຄວນ**ເບິ່ງໄປຂ້າງຫນ້າ**ແລະ**ເພັ່ງເບິ່ງ**ໃສ່ຈຸດທີ່**ຊີ້ໄປທາງຫນ້າ**. ຄຳເວົ້າທີ່ສະແດງພາບໃຫ້ເຫັນນິສັຍໃຈຄໍຂອງຜູ້ໃດຜູ້ນຶ່ງທີ່ບໍ່ຫລຽວອ້ອມຮອບໄປມາໃຫ້ຄົນອື່ນຊັກນຳໃຫ້ເຮັດຜິດກໍມີຢູ່, ແຕ່ໃຫ້ການລະມັດລະວັງຕົວຂອງຜູ້ນັ້ນຕັ້ງສູນກາງຢູ່ທີ່ພຣະຄຣິດ.

ການຮັກສາຫົວໃຈ, ການເວົ້າຈາ, ແລະຕາເປັນຈຸດສຸມຮວມອັນສູງສຸດໃນທິດທາງຂອງຊີວິດຜູ້ນັ້ນ. ຜູ້ຂຽນທີ່ມີສະຕິປັນຍາໄດ້ຊັກຊວນໃຫ້ຜູ້ອ່ານໃຫ້**ຕຶກຕອງຢ່າງລະມັດລະວັງໃນໜົນທາງ**ທີ່ພວກເຂົາດຳເນີນນັ້ນ. ຖ້າວ່າພວກທີ່ເຊື່ອຫາກຕ້ອງການໃຫ້**ທາງ**ຂອງພວກເຂົາ**ຕັ້ງຢູ່**, ຫລືໃຫ້ເປັນຈິງແລະຫມັ້ນຄົງ, ຫລັງຈາກນັ້ນແລ້ວພວກເຂົາຄວນຮ່ຳເພິງຕຶກຕອງໃຫ້ດີໃນທາງຊີວິດທີ່ພວກເຂົາໄດ້ເລືອກນັ້ນ. ນິສັຍແມ່ນລຳດັບບາດກ້າວນ້ອຍໆ, ຖ້າຫາກເດີນທາງຜິດ, ບັ້ນປາຍນັ້ນກໍຄືຄວາມຈິບຫາຍວາຍວອດ.

ໄພ່ພົນຂອງພຣະເຈົ້າຈະບໍ່**ຫລຽວໄປທາງຂວາຫລືຫລຽວໄປທາງຊ້າຍ**. ພວກເຂົາຈະບໍ່ອອກນອກທາງໂດຍການດຶງດູດຂອງສິ່ງນາງປະການແຕ່ຈະ**ເກັບຮັກສາຕີນຂອງພວກເຂົາໃຫ້ອອກຈາກຄວາມຊົ່ວຊ້າທັງຫລາຍ**. ຕລອດທັງພວກທີ່ພົ້ນແລ້ວນັ້ນກໍຕ້ອງຕັດສິນໃຈເດັດຂາດໃນການຍ່າງໃນ "ທາງຊື່ແລະຄັບແຄບ" ທຸກມື້ເພື່ອບໍ່ໃຫ້ພວກເຂົາຕົກໃນການທົດລອງແລະເຂົ້າສ່ວນໃນກິຈການທີ່ຜິດ.

ນິສັຍຢ່າງພຣະເຈົ້າຫມາຍຄວາມວ່າການພັດທະນາຄວາມຮັກສຳລັບຄວາມເປັນພຣະເຈົ້າ. ມັນຈຳເປັນຕ້ອງມີການບັງຄັບຕົນແລະກົດຣະບຽບສ່ວນຕົວ-ແຕ່ວ່າພວກເຮົາສາມາດເຮັດສິ່ງເຫລົ່ານີ້ໄດ້ໂດຍຄວາມຊ່ວຍເຫລືອຈາກພຣະເຈົ້າ. ໂດຍການຍອມມອບຫົວໃຈຂອງພວກເຮົາຕິດຕາມພຣະຄຣິດ, ພວກເຮົາຕ້ອງລົດລະຄວາມຄ້າຍຄືທີ່ພວກເຮົາຍັງມີສ່ວນພົວພັນກັນກັບສິ່ງຊົ່ວຮ້າຍ. ແທນທີ່ຈະເປັນຢ່າງນັ້ນພວກເຮົາຈະປູກການປະພຶດແລະຄວາມປາຖນາຢ່າງສລາດແລະຕໍ່ເນື່ອງໃຫ້ສມ່ຳສເມີຄຽງຄູ່ກັບຄວາມປາກົດແຈ້ງແຫ່ງຄວາມຈິງຂອງພຣະເຈົ້າ.

ນິສັຍທີ່ໄດ້ປາກົດອອກໂດຍຄວາມປະພຶດຂອງຜູ້ນັ້ນ, ກໍເລີ້ມອອກມາຈາກຫົວໃຈ. ຄວາມປະພຶດອັນໃດທີ່ສະແດງໃຫ້ເຫັນກ່ຽວກັບຫົວໃຈຂອງທ່ານ? ຄວາມຈິງທີ່ໄດ້ສອນໃນບົດຮຽນມື້ນີ້ຮວມໄດ້ດັ່ງນີ້:

- ນິສັຍຢ່າງພຣະເຈົ້າພົບແຫລ່ງຂອງມັນໃນຫົວໃຈ.
- ນິສັຍຢ່າງພຣະເຈົ້າຮັກໃນສິ່ງທີ່ພຣະເຈົ້າຮັກແລະຊັງໃນສິ່ງທີ່ພຣະເຈົ້າຊັງ.
- ນິສັຍຢ່າງພຣະເຈົ້າຕ້ອງໄດ້ປູກແລະຕ້ອງໄດ້ເກັບຮັກສາໂດຍການກະທຳທີ່ເຂັ້ມງວດ.